ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
MODERN QUICK RELIABLE
www.bcel.com.la
01, ຖະໜົນ ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ, ໂທ: +85621 213200, ລະຫັດ SWIFT: COEBLALA

ຂໍ້ມູນກ່ຽວກັບຮຸ້ນ:

ລາຄາກຳນົດ: 5,000 ກີບ/ຮຸ້ນ
ຈຳນວນຮຸ້ນທັງໝົດ: 207,723,300 ຮຸ້ນ
ລາຄາຮຸ້ນອອກຈຳໜ່າຍໃຫ້ມວນຊົນຄັ້ງທຳອິດ: 5,000 ກີບ/ຮຸ້ນ
ລາຄາຮຸ້ນ ຣອດວັນທີ 26/12/2024 ລາຄາປິດ: 5,750 ກີບ/ຮຸ້ນ
ມູນຄ່າຕະຫລາດຂອງບໍລິສັດ: 1,194 ຕື້ກີບ
ສັດສ່ວນຂອງຮຸ້ນທີ່ສາມາດຊື້-ຂາຍໃນຕະຫລາດ: 30%

ຜູ້ຖືຮຸ້ນລາຍໃຫຍ່:
- ກະຊວງການເງິນ 60% ຈຳນວນ 124,634,021 ຮຸ້ນ
- ທະນາຄານ COFIBRED, ຄູ່ຮ່ວມຍຸດທະສາດ 10% ຈຳນວນ 20,772,359 ຮຸ້ນ
- ໃນຕະຫລາດຫຼັກຊັບ 30% ຈຳນວນ 62,316,920 ຮຸ້ນ

ພະນັກງານ	ເຄືອຂ່າຍບໍລິການ	ພະແນກ ແລະ ສູນ
2.183 ຄົນ	20 ສາຂາ	11 ພະແນກ
ຍິງ 1.038 ຄົນ	101 ໜ່ວຍບໍລິການ	3 ສູນ
	12 ຫ້ອງແລກປ່ຽນ	

ທະນາຄານ ແລະ ບໍລິສັດໃນເຄືອ (% ຮຸ້ນທີ່ຖືຄອງ)

25%	30%	31,35%	70%	35%	20%	10%


ຂັນຊີເງິນຝາກ 2.900.000 +
ຈຳນວນຜູ້ໃຊ້ BCEL One 1.600.000 +
ຈຳນວນຜູ້ໃຊ້ i-Bank 57.000+

ຕິວເລກຜະລິດຕະພັນ
- OnePay 200.000+ ຮ້ານຄ້າ
- ບັດສາກົນ 35,000+ ບັດ
- ບັດ ATM 1,600,000+ ບັດ
- ATM CDM CRM ລວມ 533 ຕູ້
- 786 ຕິວແທນ Bcome (45 Super Agent)
- 532 ຕິວແທນ MoneyGram

ປະຫວັດຂອງທະນາຄານ

ທຄຕລ ເປັນທະນາຄານທຸລະກິດແຖວໜ້າໃນລາວ ທີ່ມີຜະລິດຕະພັນ ແລະ ການບໍລິການດ້ານການທະນາຄານທີ່ຫຼາກຫຼາຍ. ທະນາຄານໄດ້ມີສ່ວນຄອງຕະຫຼາດໃນລະດັບສູງ. ທະນາຄານໄດ້ຮັບການສ້າງຕັ້ງຂຶ້ນຄັ້ງທຳອິດໃນປີ 1975 ເຊິ່ງເປັນສາຂາຂອງທະນາຄານແຫ່ງ ລັດຂອງ ສປປ ລາວ ເພື່ອປະຕິບັດທຸລະກຳທະນາຄານ ແລະ ການບໍລິການທະນາຄານລະຫວ່າງ ປະເທດໃຫ້ແກ່ລັດຖະບານ. ຈາກນັ້ນ, ໃນປີ 1989, BCEL ໄດ້ຫັນເປັນທະນາຄານທຸລະກິດ ຢ່າງເປັນທາງການ ແລະ ໄດ້ເລີ່ມດຳເນີນທຸລະກິດຢ່າງເຕັມຕົວ. ໃນປີ 2011, ທຄຕລ ໄດ້ຫັນ ເປັນບໍລິສັດມະຫາຊົນ ແລະ ກາຍເປັນທະນາຄານຈົດທະບຽນແຫ່ງທຳອິດໃນຕະຫຼາດຫຼັກຊັບ ລາວ (ຕລຊລ).

ເງິນປັນຜົນຕໍ່ຮຸ້ນ (ຫົວໜ່ວຍກີບ)



ຕິວເລກຖານະການເງິນ

• ຫົວໜ່ວຍ: ລ້ານກີບ	2024	2023	ການປ່ຽນແປງ %
ລວມຍອດຊັບສິນ	142,191,250	126,433,759	12.46
ລວມໜີ້ສິນ	139,268,460	123,856,095	12.44
ລວມຍອດທຶນ	2,922,790	2,577,664	13.39
ລວມໜີ້ສິນ ແລະ ທຶນ	142,191,250	126,433,759	12.46
ລາຍຮັບດອກເບ້ຍສຸດທິ	3,652,284	1,738,189	110.12
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	830,984	553,206	50.21
ລາຍຮັບທັງໝົດຈາກການດຳເນີນງານ	5,233,865	3,128,278	67.31
ລາຍຈ່າຍທັງໝົດຈາກການດຳເນີນງານ	-1,035,914	-796,695	30.03
ກຳໄລກ່ອນອາກອນ	694,511	283,120	145.31
ກຳໄລສຸດທິຜາຍໃນປີ	449,563	231,408	94.27
ອັດຕາຜົນຕອບແທນຕໍ່ຮຸ້ນ (ກີບ)	2,164	1,114	94.25

ຕິວເລກການເງິນທີ່ສຳຄັນຂອງ ທຄຕລ

ອັດຕາສ່ວນສະພາບຄ່ອງ (Liquidity)	25.35%
ອັດຕາສ່ວນກຳໄລສຸດທິຕໍ່ທຶນທັງໝົດ (ROE):	15.38%
ອັດຕາສ່ວນກຳໄລສຸດທິຕໍ່ຊັບສິນທັງໝົດ (ROA):	0.32%
ອັດຕາສ່ວນໜີ້ສິນຕໍ່ທຶນທັງໝົດ (D/E):	4764.92%
ອັດຕາສ່ວນກຳໄລສຸດທິຕໍ່ລາຍຮັບທັງໝົດ (Net Profit Margin):	5.08%
ອັດຕາສ່ວນ NIM (Net Interest Margin):	3.06%
ອັດຕາຄວາມພຽງພໍຂອງທຶນ(Capital Adequacy Ratio)	6.00%
ອັດຕາສ່ວນເງິນກູ້/ເງິນຝາກ	46.69%
ລາຍຮັບດອກເບ້ຍສຸດທິ/ຊັບສິນທັງໝົດ	2.57%
ລາຍຈ່າຍດອກເບ້ຍ/ໜີ້ສິນທີ່ມີດອກເບ້ຍ	2.33%
ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ/ລາຍຮັບທັງໝົດຈາກການດຳເນີນງານ	32.43%
ລາຍຈ່າຍຈາກການດຳເນີນງານ/ລາຍຮັບທັງໝົດຈາກການດຳເນີນງານ	19.79%
ອັດຕາຜົນຕອບແທນຕໍ່ຮຸ້ນ EPS (ກີບ)	2,164

ຜະລິດຕະພັນ:

ເງິນຝາກ, ເງິນກູ້, ຜະລິດຕະພັນບັດພາຍໃນ, ຜະລິດບັດສາກົນເຊັ່ນ: UnionPay, VISA, JCB, Mastercard.
ຜະລິດຕະພັນອີເລັກໂທນິກ: BCEL One, BCEL i-bank, OnePay, SMS Banking, E-commerce, ATM, POS;
ບໍລິການຕ່າງປະເທດ: ໂອນເງິນດ້ວຍລະບົບ Swift, Moneygram, SPEEDSEND, ບໍລິການ LC, LG ແລະ ບໍລິການ ອື່ນໆເຊັ່ນ: ໂອນບັນຊີຮຸ້ນ, ບໍລິການດ້ວຍລິດເຄື່ອນທີ່ ແລະ ຊຳລະຄ່າໃບບິນຕ່າງໆ.



1555 | BCEL Bank

ສະມາຊິກສະພາບໍລິຫານ ທຄຕລ

BCEL BOARD OF DIRECTORS

1



ທ່ານ ສຸລິວັດ ສຸວັນນະຈຸມຄຳ
ປະທານສະພາບໍລິຫານ

Mr. Soulivath SOUVANNACHOUMKHAM
Chairman

2



ທ່ານ ປອ ອາຄົມ ປຣະເສີດ
ຮອງປະທານສະພາບໍລິຫານ

Mr. Ph.D Akhom PRASEUTH
Vice Chairman

3



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ ທຄຕລ, ກຳມະການ

Mrs. Saysamone CHANTHACHACK
Managing Director BCEL public, as Member

4



ທ່ານ ປະສົມເພັດ ຄຳຕັນ
ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ-ປະກັນໄພ
ກະຊວງການເງິນ, ກຳມະການ

Mr. Pasomphet KHAMTANH
Deputy Director General, department of State-Owned Enterprises Management and Insurance, Ministry of Finance, as Member

5



ທ່ານ ອາໂນ ເດີໂລເນ
ຕາງໜ້າ ໂກຟີ ບເຣດ, ກຳມະການ

Mr. ARNAUD DELAUNAY
COFIBRED Representative, as Member

6



ທ່ານ ຣສ. ທອງເພັດ ຈັນທະນິວົງ
ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ
ມະຫາວິທະຍາໄລແຫ່ງຊາດ, ກຳມະການອິດສະຫຼະ

Assoc.Prof. Thongpheth CHANTHANIVONG
Vice Dean of Faculty of Economics and Business Management, National University of Laos, as Independent Member

7



ທ່ານ ນ. ລັດດາວັນ ສົງວິໄລ
ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ
ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ກຳມະການອິດສະຫຼະ

Mrs. Latdavanh SONGVILAY
Director General of the Center for Macroeconomic Policy and Economic Restructuring (CMER), as Independent Member

8



ທ່ານ ສອນໄຊ ສິດາເພັດ
ປະທານວິຊາຊີບບັນຊີ ແລະ ບັນກວດສອບ, ກຳມະການອິດສະຫຼະ

Mr. Sonexay SILAPHET
President of Lao Chamber of Professional Accountants and Auditor (LCPPA), as Independent Member

ໝາຍເຫດ: ຂໍ້ມູນລ່າສຸດປີ 2024

ຄະນະຜູ້ບໍລິຫານ ທຄຕລ

BCEL Directors

1



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ ທຄຕລ
Mrs. Saysamone CHANTHACHACK
Managing Director BCEL public

2



ທ່ານ ນັນທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການ ທຄຕລ
Mr. Nanthalath KEOPASEUTH
Deputy Managing Director BCEL public

3



ທ່ານ ກົງສັກ ສຸພອນສີ
ຮອງຜູ້ອຳນວຍການ ທຄຕລ
Mr. Kongsack SOUPHONESY
Deputy Managing Director BCEL public

4



ທ່ານ ນ. ບົວໄພວັນ ນັນດາວົງ
ຮອງຜູ້ອຳນວຍການ ທຄຕລ
Mrs. Bouaphayvanh NANDAVONG
Deputy Managing Director BCEL public

5



ທ່ານ ສາຍຈິດ ສິມມະວົງ
ຮອງຜູ້ອຳນວຍການ ທຄຕລ
Mr. Saychit SIMMAVONG
Deputy Managing Director BCEL public

6



ທ່ານ ນ. ພູເສງທອງ ອະນຸລັກຄຳ
ຮອງຜູ້ອຳນວຍການ ທຄຕລ
Mrs. Phousengthong ANOULAKKHAM
Deputy Managing Director BCEL public

7



ທ່ານ ນາລິນ ສີລະວົງສິດ
ຮອງຜູ້ອຳນວຍການ ທຄຕລ
Mr. Nalinh SILAVONGSITH
Deputy Managing Director BCEL public

ລາງວັນ ແລະ ການຍ້ອງຍໍ

- ລາງວັນການເງິນສາກົນ ສາຂາ **The Most Innovative Digital Bank – Laos 2024** ຜ່ານຊ່ອງທາງເວັບໄຊທ໌ທາງການຂອງ International Finance Award.
- ລາງວັນຜູ້ອອກບັດດີເດັ່ນ ປະຈຳປີ 2023 **(Best Issuing Member Award 2023)** ຂອງບໍລິສັດ UnionPay ສາກົນ
- ລາງວັນ**ດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດໃນການຊຳລະສະສາງເປັນສະກຸນໂດລາ ປະຈຳປີ 2024** ຈາກທະນາຄານ JP Morgan Chase Bank.
- ລາງວັນ**ຜົນງານດີເດັ່ນໃນການປະຕິບັດພັນທະສ່ວຍສາອາກອນເຂົ້າງົບປະມານແຫ່ງລັດ ປະຈຳປີ 2022.**
- ໄດ້ຮັບ 2 ລາງວັນຂອງ ບໍລິສັດຈັດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ລາງວັນການເປີດເຜີຍຂໍ້ມູນດີເດັ່ນ ປະ ເພດທີ I ປະຈຳປີ 2024 ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະເພດທີ I (5ດາວ) ປະຈຳປີ 2024.

ທິດທາງ ແລະ ແຜນການ ທຄຕລ 2025

- ສຸມໃສ່ການພັດທະນາປັບປຸງການບໍລິການໃຫ້ແທດເໝາະກັບໄລຍະການປ່ຽນແປງໃໝ່ໃຫ້ມີຄວາມສະດວກ ແລະ ວ່ອງໄວ ໂດຍຍຶດຖືເອົາລູກຄ້າເປັນໃຈກາງ,
- ຍົກສູງການຄຸ້ມຄອງສິນເຊື່ອໃຫ້ມີປະສິດທິພາບພ້ອມສ້າງຖານລູກຄ້າສິນເຊື່ອໃຫ້ມີຄຸນນະພາບ, ຖືເອົາວຽກງານແກ້ໄຂໜີ້ເປັນບຸລິມະສິດ,
- ເອົາໃຈໃສ່ບໍລິຫານແຫຼ່ງທຶນໃຫ້ມີປະສິດທິພາບຫຼາຍຂຶ້ນຄົ້ນຄວ້າຮູບແບບການລົງທຶນທີ່ຫຼາກຫຼາຍ ແລະ ເໝາະສົມກັບແຫຼ່ງທຶນເພື່ອສ້າງລາຍຮັບໃຫ້ສູງຂຶ້ນ,
- ຫັນວຽກງານເປັນທັນສະໄໝເປັນບຸລິມະສິດຕົ້ນຕໍເພື່ອຮັກສາຄວາມເປັນຜູ້ນຳດ້ານ Digital Banking ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝເຂົ້າໃນລະບົບບໍລິການ,
- ຄົ້ນຄວ້າພັດທະນາຍົກລະດັບທຸກຜະລິດຕະພັນໃຫ້ທັນສະໄໝ ແລະ ປອດໄພຍິ່ງຂຶ້ນ, ເອົາໃຈໃສ່ຄຸ້ມຄອງ/ປັບປຸງ ແລະ ຍົກລະດັບລະບົບຕ່າງໆໃຫ້ມີຄວາມສະຖຽນບໍ່ໃຫ້ເກີດມີບັນຫາທີ່ຈະກະທົບຕໍ່ການບໍລິການລູກຄ້າ,
- ຫັນໄປສູ່ການຕະຫຼາດແບບບຸກທະລຸຫຼາຍຂຶ້ນໂດຍການລົງຫາກຸ່ມລູກຄ້າເປົ້າໝາຍຕ່າງໆດ້ວຍຫຼາຍຮູບແບບ,
- ປະຕິບັດຕາມຫຼັກການບາເຊວ II.
- ຈັດວາງບຸກຄະລາກອນຜາຍໃນໃຫ້ແທດເໝາະກັບໜ້າວຽກ, ມີຄວາມຊຳນິຊຳນານສະເພາະດ້ານ, ເປັນມືອາຊີບດ້ານການບໍລິການທະນາຄານເພື່ອຮອງຮັບການປ່ຽນແປງຂອງການພັດທະນາ ທຄຕລ ໃນທຸກດ້ານ,
- ສ້າງປະສິດທິພາບທາງດ້ານການເງິນເພື່ອຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.